## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 4 ກັນຍາ 2022 (09-04-2022)

---

### ຄວາມເຊື່ອສະແດງອອກໃນຍາມຍາກລໍາບາກ

*ບົດຮຽນໃດທີ່ທ່ານໄດ້ຮຽນຮູ້ຫຼັງຈາກຜ່ານຜ່າຄວາມຂັດສົນມາ?*

**ຈຸດສໍາຄັນໃນບົດຮຽນ:** ພຣະເຈົ້າໃຊ້ການທົດລອງເພື່ອໃຫ້ຄວາມເຊື່ອຂອງທ່ານໃຫຍ່ຂຶ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຫົນທາງອາດບໍ່ງ່າຍສເມີ ສໍາລັບ ເດບ ດຣາເວກີ້. ຂນະເປັນຜູ້ແກ່ວງລູກບານເບສບອລໃຫ້ ແຊນຟແຣນຊິສໂກ ຈາຍແອນ, ທ່ານໝໍວິຈັຍພົບມະເລງໃນແຂນເບື້ອງແກ່ວງຂອງດຣາເວກີ້. ການຜ່າຕັດຕາມມາບໍ່ໄດ້ຍັບຍັ້ງລາວ; ລາວຢືນຢັນທີ່ຈະແກ່ວງລູກບານຕໍ່. ໃນວັນທີ 10 ເດືອນກໍຣະກະດາ 1989, ພຽງສິບເດືອນຫຼັງຈາກການຜ່າຕັດເອົາເນື້ອງອກອອກ ເດບ ໄດ້ໄຊຊນະເກມແລກຫຼັງຈາກການກັບມາຂອງລາວ. ເຖິງປານນັ້ນ ຫ້າວັນຕໍ່ມາ ກ່ອນຮອບທີຫົກ, ລາວໄດ້ແກ່ວງລູກທີຫົກສິບເກົ້າ ໃນຄືນນັ້ນ. ລາວບໍ່ອາດແກ່ວງຕື່ມໄດ້ອີກ.

ລູກສຸດທ້າຍນີ້, ດຣາເວກີ້ໄດ້ເຮັດໃຫ້ດູກກົກແຂນພິກ ແລະລົ້ມຂວ້ໍາລົງດິນດ້ວຍຄວາມເຈັບປວດ. ແຂນຊ້າຍຂອງລາວອ່ອນເພັຽຍ້ອນມະເລງ ບວກການຜ່າຕັດ ແລະລັງສີ ບໍ່ສາມາດຫຼິ້ນເກມໃຫຍ່ຄັ້ງນີ້ໄດ້ຕໍ່ໄປ. ເຫດສະນັ້ນທ່ານໝໍຈຶ່ງໄດ້ຕັດແຂນຊ້າຍຂອງດຣາເວກີ້ອອກເພື່ອຮັກສາຊີວິດລາວໄວ້, ໃນເມື່ອລັງສີແລະການຜ່າຕັດບໍ່ສາມາດຍັບຍັ້ງມະເລງໄດ້.

ມັນເປັນການຍາກທີ່ຈະຄິດເຖິງຄວາມຍິນດີໃນຄາວຂັດສົນ ດັ່ງທີ່ດຣາເວກີ້ໄດ້ປະສົບມາ, ແຕ່ ຢາໂກໂບໄດ້ຂຽນໄວ້ວ່າພວກເຮົາຄວນຄິດວ່າເປັນການລອງໃຈ. ເພິ່ນບໍ່ໄດ້ສອນວ່າການທົດລອງເປັນຄວາມຍິນດີ, ແຕ່ ພວກເຮົາສາມາດດໍາເນີນຊີວິດຢູ່ດ້ວຍຄວາມຍິນດີ ແມ້ກະທັ້ງເວລາປະສົບພັຍວິບັດ ຫຼື ຍາມຍາກລໍາບາກ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**<u>1. ຢາໂກໂບ 1:1-4.</u>**

*[1]ຈາກ ຢາໂກໂບ ຜູ້ເປັນຂ້ອຍໃຊ້ຂອງພຣະເຈົ້າ ແລະ ຂອງພຣະເຢຊູຄຣິດເຈົ້າ ເຖິງຄົນສິບສອງກະກຸນທີ່ກະຈັດກະຈາຍຢູ່ນັ້ນ. [2]ພີ່*
*ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ, ເມື່ອພວກທ່ານປະສົບການທົດລອງຕ່າງໆ ຈົ່ງຖືວ່າເປັນເຣື່ອງໜ້າຍິນດີທີ່ສຸດ. [3]ເພາະທ່ານທັງ*
*ຫລາຍຮູ້ຢູ່ວ່າການລອງເບິ່ງຄວາມເຊື່ອຂອງພວກທ່ານນັ້ນ ໃຫ້ເກີດຄວາມໝັ້ນໃຈ. [4]ແລະຈົ່ງໃຫ້ຄວາມໝັ້ນໃຈນັ້ນດໍາເນີນງານຈົນສໍາ*
*ເລັດ ເພື່ອທ່ານທັງຫລາຍຈະໄດ້ເປັນຄົນສໍາເລັດ ແລະຄົບຖ້ວນໂດຍບໍ່ຂາດເຂີນສິ່ງໃດ.*

ຫຼັງຈາກຄໍານໍາສັ້ນໆແລ້ວ, ທ່ານຢາໂກໂບໄດ້ເລັ່ງໃສ່ປະເດັນໂລດ. ເພິ່ນຮຽກຮ້ອງໃຫ້ຜູ້ອ່ານແລະພວກເຮົາໃຫ້ປະເຊີນ "ການທົດລອງຕ່າງໆ" ຂອງເຮົາ ດ້ວຍ "ຄວາມຍິນດີອັນໃຫຍ່ຫຼວງ." ການເປັນຄຣິສະຕຽນທີ່ຍິນດີບໍ່ແມ່ນທາງເລືອກ; ໃນຄວາມເປັນຈິງແລ້ວ, "ໃຫ້ຖືວ່າແມ່ນຄວາມຍິນດີອັນໃຫຍ່ຫຼວງ" ນີ້ແມ່ນຄວາມຈໍາເປັນ. ຄວາມສຸກແລະຄວາມຍິນດີແມ່ນເຣື່ອງງ່າຍ ຖ້າແມ່ນສິ່ງຊື່ນໃຈແລະໄປຕາມທາງຂອງເຮົາ, ແຕ່ຄວາມຍິນດີບໍ່ແມ່ນການສະແດງອອກກ່ອນໝູ່ໃນຍາມຫຍຸ້ງຍາກ. ຕາມທັມມະຊາດມີແນວໂນ້ມຕອບສນອງການທົດລອງດ້ວຍຄວາມຢ້ານ, ຄວາມໂກດ, ແລະຄວາມກັງວົນ. ການມີຄວາມຍິນດີໃນພັຍວິບັດ ຫຼື ຍາມຂັດສົນບໍ່ແມ່ນການໂຕ້ຕອບຕາມສັນຊາດຍານ!

ດັ່ງເພິ່ນໄດ້ຂຽນໄວ້ອີກ13ເທື່ອ ໃນຈົດໝາຍຂອງເພິ່ນ, ທ່ານຢາໂກໂບອ້າງເຖິງຜູ້ອ່ານເໝືອນ "ອ້າຍແລະນ້ອງຂອງເຮົາ."ນັ້ນແມ່ນ

ສິ່ງສຳຄັນຕ້ອງຈື່ ເມື່ອເຮົາພິຈາຣະນາສິ່ງນີ້ວ່າເປັນຄຳສັ່ງທີ່ບໍ່ທັມມະດາ. ໂລກບໍ່ມີຄວາມຍິນດີໃນຍາມດີ້ນລົນເພາະອາດເປັນເວລາໂດດດ່ຽວແລະເຫັນຫ່າງ, ແຕ່ສຳລັບຜູ້ທີ່ຕິດຕາມພຣະຄຣິດ, ພວກເຮົາບໍ່ໄດ້ຢູ່ໂດດດ່ຽວ; ພວກເຮົາມີການສາມະຄີທັມກັບຜູ້ເຊື່ອອື່ນໆ. ໃນພຣະຄຣິດພວກເຮົາສາມາດມີຄວາມຍິນດີ. ຄວາມຍິນດີແມ່ນການຕອບສນອງແບບເໜືອທັມມະຊາດ, ໄດ້ຊົງປະທານໃຫ້ໂດຍພຣະເຈົ້າ "ຜູ້ຊົງເມດຕາແລະເອັນດູ" (ຢກບ 5:11). ນອກຈາກຄວາມເອົາໃຈໃສ່ແທ້ຈິງແລ້ວທ່ານຢາໂກໂບຢາກໃຫ້ເຮົາຄິດກ່ຽວກັບການທົດລອງໄປໃນທາງຄຣິສະຕຽນຕ່າງຫາກ: ໂດຍບໍ່ຕິ, ບໍ່ຮ້ອງໄຫ້, ຫຼື ບໍ່ຈົ່ມ, ແຕ່ດ້ວຍ "ຄວາມຍິນດີອັນໃຫຍ່ຫຼວງ."

ຖ້ອຍຄຳ "ການທົດລອງຕ່າງໆ" ກວມເອົາຄວາມທຸກລຳບາກທີ່ຫຼາຍຄົນໄດ້ຮັບ ແລະການທົດລອງສະເພາະທີ່ຄຣິສະຕຽນຖືກຂົ່ມເຫັງຍ້ອນຄວາມເຊື່ອຂອງເຂົາ (ຢກບ 5:10-11). ຄຣິສະຕຽນສາມາດພົບຄວາມຍິນດີໃນທຸກໆວັນທີ່ຊີວິດປ່ຽນໄປເຊັ່ນດຽວກັບວັນທີ່ຊົ່ວຮ້າຍ. ການທົດລອງໃດນຶ່ງກໍເພື່ອທົດສອບຄວາມເຊື່ອຂອງເຮົາ ແລະໃນຂັ້ນຕອນຕ່າງໆ, ການທົດລອງເຫຼົ່ານັ້ນສາມາດເຮັດໃຫ້ຄວາມເຊື່ອຂອງເຮົາເກີດພະລັງ. ການທົດລອງຂອງພວກເຮົາປຽບເໝືອນໃບຢັ້ງຢືນຂັ້ນຕອນຄວາມເຊື່ອຂອງເຮົາ.

*ມີການທົດລອງໃດແດ່ທີ່ມະນຸດເຮົາປະສົບໃນໂລກທຸກວັນນີ້?*

ເວລາ ທ່ານຢາໂກໂບເວົ້າເຣື່ອງ "ການທົດສອບຄວາມເຊື່ອຂອງ[ເຮົາ]" (ຂໍ້3), ເພິ່ນໄດ້ໃຊ້ຄຳທີ່ປາກົດໃນພຣະຄັມພີໃໝ່ທີ່ນີ້ເທົ່ານັ້ນແລະເທື່ອດຽວຢູ່ບ່ອນອື່ນ. ທ່ານເປໂຕກໍໄດ້ໃຊ້ຄຳນີ້ເພື່ອປຽບທຽບ ການທົດລອງຕ່າງໆຂອງຜູ້ເຊື່ອຄືດັ່ງໄຟຫຼອມ, ທີ່ເຜົາໄໝ້ສິ່ງເຈືອປົນອອກໄປ (1 ເປໂຕ 1:6-7). ວັນຍາກລຳບາກເກີດຂຶ້ນເພື່ອເຈັ່ຽຣະນັຍຄວາມເຊື່ອຂອງເຮົາ. ການທົດລອງກັ່ນຕອງຄວາມເຊື່ອຂອງຜູ້ເຊື່ອ.

ໂດຍທາງການທົດລອງ, ຜູ້ເຊື່ອໄດ້ຮັບພະລັງອົດທົນຕໍ່ຄວາມຍາກລຳບາກ. ພວກເຮົາກາຍເປັນຄົນໝັ້ນຄົງ. ການທົດລອງເສີມພະລັງຄວາມເຊື່ອຂອງເຮົາ ເໝືອນດັ່ງລົມເສີມຄວາມແຂງແກ່ນໃຫ້ຕົ້ນໄມ້. ດັ່ງດຽວກັນກັບລົມເຮັດໃຫ້ຕົ້ນໄມ້ແຂງແຮງຂຶ້ນ, ໃຫ້ພະລັງມັນເພື່ອຢຶດນ້ຳໜັກລຳຕົ້ນໄວ້ໄດ້, ການທົດລອງກໍໃຫ້ພລັງຜູ້ເຊື່ອໃຫ້ມີຄວາມສາມາດສູ້ທົນຕໍ່ຄວາມໜັກໜ່ວງຂອງຊີວິດ. ນີ້ບໍ່ແມ່ນການທົດສອບພະລັງແລະປັນຍາຂອງເຮົາເອງ; ແຕ່ວ່າ, ແມ່ນການທົດສອບຄວາມເຊື່ອຂອງເຮົາໃນປັນຍາຂອງພຣະເຈົ້າເພື່ອມອງເຫັນເຮົາທະລຸ. ຄວາມເຊື່ອຄືກ້າມເນື້ອທີ່ຕ້ອງໄດ້ອອກກຳລັງກາຍຈຶ່ງໄດ້ຮັບກຳລັງ.

ການທົດສອບຄວາມເຊື່ອຂອງເຮົາເປັນຜົນເພື່ອໃຫ້ສິ່ງສະເພາະໃດນຶ່ງສຳເລັດ. ເປົ້າໝາຍສູງສຸດຂອງພຣະເຈົ້າໃນການທົດສອບແມ່ນເພື່ອໃຫ້ຄວາມເຊື່ອຂອງເຮົາ "ເຕີບໃຫຍ່ແລະຄົບຖ້ວນ." ໂດຍການທົດລອງພວກເຮົາຈະພົບວ່າພຣະອົງກຳລັງເສີມສ້າງ "ຄວາມອົດທົນ"-ມີພະລັງ-ຢູ່ໃນເຮົາສເມີ. ຄຳວ່າ ອົດທົນ ມີຄວາມຄວາມໝາຍວ່າຮອງຮັບໄດ້. ບາງຄັ້ງເຮົາເອີ້ນວ່າ ຄວາມອົດທົນ, ຄວາມໝັ້ນໃຈ, ຄວາມໝັ້ນຄົງ, ແຕ່ແມ່ນການງານຂອງພຣະເຈົ້າໃນການເສີມສ້າງກ້າມເນື້ອຝ່າຍວິນຍານ ແລະຈະສົ່ງຜົນໃຫ້ຕັ້ງໝັ້ນຄົງຢູ່. ສະນັ້ນ ພວກເຮົາຈຶ່ງບໍ່ທັນເຫໄປຈາກພຣະປະສົງຂອງພຣະອົງແມ່ນແຕ່ໃນຣະຫວ່າງການທົດລອງແລະການທົນທຸກ, ແລ້ວຄວາມເຊື່ອຂອງເຮົາຈະບໍ່ຂາດສິ່ງໃດ.

*ມີຜົນກຳໄລຝ່າຍວິນຍານຫຍັງພວກເຮົາຈຶ່ງຢືນຢັດເພື່ອໄດ້ຮັບຈາກການປະສົບການທົດລອງ?*

## 2. ຢາໂກໂບ 1:5-8.

*5 ແຕ່ຖ້າຄົນໃດໃນພວກທ່ານຂາດສະຕິປັນຍາ ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າ ຜູ້ຊົງໂຜດປະທານໃຫ້ແກ່ຄົນທັງປວງດ້ວຍພຣະກະລຸນາ ແລະບໍ່ຊົງກ່າວຕິ ແລະຜູ້ນັ້ນກໍຈະໄດ້ຮັບສິ່ງທີ່ທູນຂໍ. 6 ແຕ່ ໃຫ້ຜູ້ນັ້ນທູນຂໍດ້ວຍຄວາມເຊື່ອ ຢ່າໃຫ້ມີໃຈສົງສັຍ ເພາະຜູ້ທີ່ສົງສັຍນັ້ນເປັນເໝືອນຟອງນ້ຳທີ່ຖືກລົມພັດຊັດໄປມາ. 7 ຢ່າໃຫ້ຜູ້ນັ້ນຄຶດວ່າຕົນຈະໄດ້ຮັບສິ່ງໃດຈາກອົງພຣະຜູ້ເປັນເຈົ້າ. 8 ເປັນຄົນສອງໃຈ ບໍ່ແນ່ນອນໃນບັນດາທາງຂອງຕົນ.*

ການຕັ້ງໝັ້ນແລະຄວາມອົດທົນຕ້ອງການຄຸນພາບ, ແຕ່ຍັງບໍ່ພໍ. ພວກເຮົາຍັງຕ້ອງການປັນຍາເໝືອນກັນ. ການທົດລອງພາໃຫ້ບາງຄົນ

ຄິດວ່າຄວາມທຸກທໍຣະມານແມ່ນການລົງໂທດຍ້ອນຄວາມຜິດຂອງເຂົາ. ບາງຄັ້ງ ໝູ່ເພື່ອນກໍຊ້ຳເຕີມຜູ້ທີ່ປະສົບການທົດລອງວ່າເຂົາສົມຄວນໄດ້ຮັບຄວາມທຸກທໍຣະມານທີ່ເຂົາກຳລັງປະສົບຢູ່ນັ້ນ, ລຸມເລົ້າດ້ວຍຄວາມອິດເມື່ອຍຈາກການທົດລອງເອງ, ສິ່ງເຫຼົ່ານັ້ນເລີ່ມເຮັດໃຫ້ເຮົາອ່ອນເພັຽລົງ. ໃນບໍ່ຊ້າພວກເຮົາກໍຈະທໍ້ຖອຍ, ກ້າວໄປສູ່ຄວາມສົງສັຍໃນຕົວເອງແລະສູ່ຄວາມພ່າຍແພ້. ແນ່ນອນການທົດລອງຂອງເຮົາບາງຄັ້ງອາດເປັນຜົນຈາກການຕັດສິນໃຈທີ່ຜິດ ແລະການປະພຶດຜິດສິນທັມຂອງເຮົາ, ແຕ່ບໍ່ແມ່ນການທົດລອງທຸກຢ່າງແມ່ນການລົງໂທດ. ມັນຕ້ອງໃຊ້ປັນຍາທີ່ສລາດໃນການຈຳແນກຄວາມແຕກຕ່າງກັນ.

ຣະຫວ່າງການທົດລອງ, ພວກເຮົາບໍ່ຕ້ອງການການຕັດສິນຢ່າງໂລກ; ພວກເຮົາຕ້ອງການປັນຍາຂອງພຣະເຈົ້າ, ປັນຍາທີ່ພຣະອົງໄດ້ມອບໃຫ້ເຮົາ. ຜູ້ເຊື່ອສາມາດເຂົ້າຫາພຣະເຈົ້າຢ່າງກ້າຫານ. ເມື່ອເຮົາເຂົ້າຫາພຣະອົງ, ພວກເຮົາສາມາດທູນຂໍປັນຍາດ້ວຍການຮັບຮອງຢ່າງເຕັມປ່ຽມວ່າ ພຣະອົງຈະຈັດຫາໃຫ້. ພຣະເຈົ້າບໍ່ໄດ້ປະທານປັນຍາໃຫ້ເຮົາຍ້ອນເຮົາຄູ່ເຫັນ. ພວກເຮົາສາມາດເຂົ້າຫາພຣະເຈົ້າ, ທູນຂໍປັນຍາຈາກພຣະອົງຍ້ອນພຣະລັກສນະຂອງພຣະເຈົ້າ. ພຣະເຈົ້າເປັນຜູ້ປະທານປັນຍາດ້ວຍຄວາມເມດຕາ, ພຣະອົງບໍ່ໄດ້ຕິຜູ້ທີ່ຕ້ອງການປັນຍາ. ພຣະອົງບໍ່ສງວນປັນຍາຈາກຜູ້ເຊື່ອທີ່ທູນຂໍດ້ວຍຄວາມເຊື່ອທີ່ບໍ່ສົງສັຍ.

*ມີອຸປສັກຫຍັງເພື່ອສແວງຫາປັນຍາຂອງພຣະເຈົ້າໃນເວລາຖືກການທົດລອງ?*

ແມ່ນແຕ່ຄົນທີ່ເຊື່ອໃນພຣະເຈົ້າ ກໍສາມາດເປັນເປ້ຍລ່ອຍ ຍ້ອນການໂຕ້ຖຽງທີ່ບໍ່ຢຸດຢັ້ງ ທີ່ເຮັດໃຫ້ເຂົາອິດອ່ອນຝ່າຍວິນຍານ. ໃນຊ່ວງເວລານຶ່ງ ເຂົາເຊື່ອວ່າພຣະເຈົ້າຈະຕອບຄຳອ້ອນວອນຂອງເຂົາ; ໃນຊ່ວງຕໍ່ໄປເຂົາຈະບໍ່ເຊື່ອ. ໂອ່ນອຽງໄປຕາມກະແສລົມພັດຊັດໄປມາ, ພວກເຂົາບໍ່ມີຮາກຖານອັນໝັ້ນຄົງ. ພວກເຂົາເຊື່ອວ່າມີພຣະເຈົ້າ, ແຕ່ເຂົາບໍ່ເຊື່ອວ່າພຣະເຈົ້າຕອບຄຳອ້ອນວອນຂອງເຂົາ.

ພຣະເຈົ້າຈະຕອບ, ຕໍ່ເມື່ອຄຳອ້ອນວອນຂອງເຂົາປະກອບດ້ວຍຄວາມແນ່ນອນໃຈ, ຄວາມແນ່ນອນໃຈໃນພຣະອົງຢ່າງບໍ່ຫວັ່ນໄຫວ-ຄວາມເຊື່ອທີ່ເຂັ້ມແຂງທີ່ພຣະເຈົ້າຈະປະທານປັນຍາໃຫ້. ພວກທີ່ມີຄວາມເຊື່ອບໍ່ແນ່ນອນຈະບໍ່ຍິນດີໃນຜົນຂອງຄວາມສັດຊື່ຂອງພຣະເຈົ້າ. ຄວາມເຊື່ອຄອນແຄນນີ້ບໍ່ສົງສັຍການມີຢູ່ຂອງພຣະເຈົ້າ; ມັນຫວັ່ນໄຫວເພາະເຂົາສົງສັຍຄວາມສັດຊື່ຂອງພຣະເຈົ້າ.

## 3. ຢາໂກໂບ 1:9-12.

*[9] ໃຫ້ພີ່ນ້ອງທີ່ຕ່ຳຕ້ອຍຈົ່ງອວດອ້າງໃນການທີ່ພຣະເຈົ້າຊົງຍົກຍໍຕົວຂຶ້ນ. [10] ແຕ່ໃຫ້ຄົນຮັ່ງມີຈົ່ງອວດອ້າງໃນການທີ່ພຣະເຈົ້າຊົງໃຫ້ຕົກຕ່ຳລົງ ເພາະວ່າຕົນຈະຕ້ອງລ່ວງລັບໄປເໝືອນດັ່ງດອກຫຍ້າ. [11] ເພາະເມື່ອຕາເວັນຂຶ້ນຄວາມຮ້ອນອັນແຮງກ້າກໍເຮັດໃຫ້ຫຍ້າຫ່ຽວແຫ້ງໄປແລ້ວດອກຫຍ້າກໍຕົກຫຼົ່ນລົງ ສີສັນວັນນະຄວາມງາມຂອງມັນກໍສຸດສິ້ນໄປ ດັ່ງນີ້ແຫລະ, ຄົນຮັ່ງມີຈະເສື່ອມສູນໄປໃນຂນະທີ່ດຳເນີນງານຂອງຕົນເໝືອນກັນ. [12] ຄົນທີ່ອົດທົນຕໍ່ການທົດລອງໃຈກໍເປັນສຸກ ເພາະເມື່ອປາກົດວ່າຜູ້ນັ້ນທົນໄດ້ແລ້ວກໍຈະໄດ້ຮັບພວງມາລັຍແຫ່ງຊີວິດ ຊຶ່ງພຣະເຈົ້າໄດ້ຊົງສັນຍາໄວ້ແກ່ຄົນທັງຫຼາຍທີ່ຮັກພຣະອົງ.*

ທ່ານຢາໂກໂບໄດ້ສັ່ງໃຫ້ "ພີ່ນ້ອງທີ່ຕ່ຳຕ້ອຍ"-ຜູ້ເຊື່ອທີ່ຍາກຈົນ-ໃຫ້ອວດອ້າງ "ການທີ່ພຣະເຈົ້າຊົງຍົກຕົວຂຶ້ນ." ຄົນຍາກຈົນມີຫັຽງອວດແລະຍິນດີ? ທ່ານຢາໂກໂບຈະຕອບໃຫ້ຄົບຖ້ວນກວ່ານີ້ຕໍ່ໄປ. ພຣະເຈົ້າໄດ້ເລືອກເອົາຄົນທຸກຈົນໃນໂລກນີ້ ໃຫ້ຮັ່ງມີໃນຄວາມເຊື່ອແລະຮັບອານາຈັກສວັນເປັນມໍຣະດົກ ຊຶ່ງພຣະອົງໄດ້ສັນຍາໄວ້ກັບຜູ້ທີ່ຮັກພຣະອົງບໍ່?" (ຢກບ 2:5). ຄວາມທຸກຈົນຂອງເຂົາເປັນສິ່ງຢ້ຳເຕືອນເຂົາໃຫ້ເພິ່ງພຣະເຈົ້າ ຜູ້ຈັດຫາໂອກາດບໍ່ຢຸດຢັ້ງໃຫ້ຊົມໃຊ້ຄວາມເຊື່ອຂອງເຂົາ. ຄວາມຮັ່ງມີອາດເປັນການທົດລອງເໝືອນກັນ. ທ່ານຢາໂກໂບບໍ່ໄດ້ສອນອ້າຍນ້ອງຮັ່ງມີ ອວດຄວາມຄວາມຮັ່ງມີຂອງເຂົາ; ແທນທີ່ຈະອວດຄວາມຮັ່ງມີ, ເຂົາຄວນອວດ "ໃນຄວາມຕົກຕ່ຳດີກວ່າ." ຄວາມຮັ່ງມີອຳນວຍປໂຍດນອກກາຍຫຼາຍຢ່າງ. ຕົວຢ່າງ, ຜູ້ມີເງິນຫຼາຍ ສ່ວນມາກຈະບໍ່ມີຄວາມກັງວົນນຳສິ່ງຈຳເປັນເບື້ອງຕົ້ນຂອງຊີວິດ. ເຖິງປານນັ້ນ, ເຂົາຍັງມີຄວາມຕ້ອງການເລິກໆຊຶ່ງເງິນບໍ່ສາມາດຊື້ໄດ້, ຫຼືເງິນຂອງເຂົາອາດສ້າງບັນຫາທີ່ເຂົາບໍ່ເຄີຍມີມາກ່ອນ (ຢາໂກໂບ 5:1-6).

ຈຽວລຽນ ເບຟອດ ໄດ້ຮຽນຮູ້ກ່ຽວກັບການທົດລອງຄວາມຮັ່ງມີໃນທາງທີ່ຍາກຫຼາຍ. ນາງຄິດວ່າບັນຫາທັງໝົດຂອງນາງໃຫຍ່ເກີນໄປຕອນທີ່ນາງຖືກຫວຍ 148 ລ້ານປອນອັງກິດ ໃນປີ 2012. ສິບຫ້າເດືອນຕໍ່ມາ, ການສົມຣົດຂອງນາງໄດ້ຂາດສະບັ້ນລົງ. ນາງເວົ້າ

ວ່າຄວາມຮັ່ງມີໄດ້ທຳລາຍຄອບຄົວຂອງນາງໃຫ້ແຕກສລາຍໄປ. ແທນທີ່ຈະຊື່ນລົດຄວາມສຸກທີ່ນາງຄາດຫວັງໄວ້, ຈຽວລຽນເວົ້າວ່າການແຕ່ງງານຂອງນາງສິ້ນສຸດລົງ ແລະນາງກໍບໍ່ໄດ້ໂອ້ລົມກັບພໍ່ແມ່ຫຼືອ້າຍນ້ອງອີກເລີຍ. ເງິນບໍ່ໄດ້ປົວແປງທຸກສິ່ງ. ມັນທຳລາຍບາງສິ່ງ.

ຄົນຮັ່ງມີເຮັດຜິດພາດຢ່າງຮ້າຍແຮງຖ້າເຂົາຄິດວ່າຊັບສົມບັດມະຫາສານແມ່ນສິ່ງທີ່ເຂົາເປັນເຈົ້າຂອງ. ຊັບສິນເຫຼົ່ານັ້ນເປັນຂອງຊົ່ວຄາວເຫຼືອເກີນ. ເຖິງແມ່ນວ່າ, ຄວາມຮັ່ງມີດ້ານເງິນຄຳຊ່ອຍໃຫ້ລອດຕາຍຈາກພາວະເສຖກິດຕົກຕໍ່າ, ກໍບໍ່ມີໃຜເອົາເງິນໄປຫຼຸມຝັງສົບນຳໄດ້. ຄົນຮັ່ງມີກໍຕ້ອງການຄວາມເມດຕາຈາກພຣະເຈົ້າ. ພຽງແຕ່ເວລາເຂົານຶກຂຶ້ນມາໄດ້ວ່າຄວາມຕ້ອງການອັນໃຫຍ່ຈະຊັກນຳເຂົາສແວງຫາ ແລະພົບຄວາມຮັ່ງມີນິຣັນໃນພຣະຄຣິດ. ສຳລັບເຫດຜົນນີ້, ຄົນຮັ່ງມີສາມາດອວດແລະຕ້ອງອວດໃນ "ຄວາມຕົກຕໍ່າຂອງເຂົາ." ເຫດຜົນສຸດທ້າຍສຳລັບທັງຄົນທຸກແລະຄົນຮັ່ງມີທີ່ເຊື່ອຕ້ອງສລອງບໍ່ອາດພົບໃນຊາດນີ້ ແຕ່ໃນຊາດທີ່ຈະມາ. ໃນໂລກນີ້, ການທົດລອງໃຫ້ພະລັງຄວາມເຊື່ອຂອງເຮົາ, ແລະ ຄວາມເຊື່ອນັ້ນຈະຢູ່ກັບເຮົາຈົນເທົ່າເຮົາໄດ້ຢູ່ກັບພຣະຄຣິດຊົ່ວນິຣັນດອນ.

*ພາບສວັນຂອງທ່ານທັບປຸ່ງການຕອບສນອງຕໍ່ການທົດລອງຂອງທ່ານຢ່າງໃດ?*

## ນຳໃຊ້ໃນຊີວິດ

ທ່ານຈະດຳເນີນຊີວິດໃນພຣະທັມຄວາມຈິງຊຶ່ງພຣະເຈົ້າໄດ້ໃຊ້ການທົດລອງເພື່ອເສີມສ້າງຄວາມເຊື່ອຂອງທ່ານໃຫ້ໃຫຍ່ຂຶ້ນຢ່າງໃດ? ຈົ່ງເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງອ້ອນວອນຂໍພະລັງ.** ບໍ່ວ່າໃນການທົດລອງໃດໆທີ່ທ່ານປະເຊີນຢູ່, ຈົ່ງຮ້ອງຫາພຣະເຈົ້າຊ່ອຍ. "ຈົ່ງສແວງຫາພຣະເຈົ້າໃນຂນະທີ່ທ່ານອາດພົບພຣະອົງ, ຮ້ອງຫາພຣະອົງໃນຂນະທີ່ພຣະອົງຢູ່ໃກ້ (ເອຊາຢາ 55:6). ອົງພຣະຜູ້ເປັນເຈົ້າໄດ້ປະສົບການທົດລອງດັ່ງທີ່ເຮົາໄດ້ຮັບ, ແລະພຣະອົງຊົງເຫັນໃຈໃນຄວາມອ່ອນແອຂອງມະນຸດເຮົາ (ເຮັບເຣີ 4:15).
- **ຈົ່ງທູນຂໍຄວາມຊ່ອຍເຫຼືອ.** ມັນເປັນການງ່າຍສຳລັບຜູ້ເຊື່ອສ່ວນຫຼາຍໃນການໃຫ້ຄວາມຊ່ອຍເຫຼືອແກ່ຄົນອື່ນຫຼາຍກວ່າທີ່ຈະຂໍຄວາມຊ່ອຍເຫຼືອ. ຖ້າທ່ານປະສົບການທົດລອງທີ່ໜັກໜ່ວງ, ຈົ່ງອອກໄປຫາເພື່ອໃກ້ສິດ, ຜູ້ນຳການສຶກສາພຣະຄັມພີ, ສິດຍາພິບານຂອງທ່ານ ແລະ ຂໍຄວາມຊ່ອຍເຫຼືອຈາກເຂົາ. ເຂົາຍິນດີທີ່ຈະຊ່ອຍແບ່ງເບົາພາລະໜັກຂອງທ່ານ (ຄາລາເຕັຽ 6:2) ເຊັ່ນດຽວກັບທ່ານຢາກຊ່ອຍຄົນອື່ນເໝືອນກັນ.
- **ຈົ່ງສແວງຫາໂອກາດຮັບໃຊ້ໂດຍການໃຊ້ຄວາມເຈັບປວດຂອງທ່ານ.** ຫຼັງຈາກຕັດສິນໃຈຕັດອາຊີບນີ້ອອກ, ເດບ ດຣາເວກີ້ແລະພັລຍາຂອງລາວ ໄດ້ກໍ່ຕັ້ງອົງການຮັບໃຊ້ນຶ່ງຂຶ້ນຊື່, endurance.org, ເພື່ອຊ່ອຍຄົນທີ່ປະເຊີນກັບການທົດລອງ. ຈົ່ງຊອກຫາທາງນຳໃຊ້ຄວາມເຈັບປວດຂອງທ່ານເພື່ອໃຫ້ເກີດຜົນປໂຍດແກ່ຄົນອື່ນ.

ພວກເຮົາທຸກຄົນມີການສູ້ຊົນຂອງໃຜລາວ. ຊີວິດມີຄວາມຝືດເຄືອງ. ແຕ່ພວກເຮົາສາມາດດຳເນີນຊີວິດຢູ່ດ້ວຍຄວາມຍິນດີແມ້ໃນຍາມຂັດສົນ. ແລະຈາກຄວາມຍິນດີນັ້ນ ພວກເຮົາສາມາດເປັນພຣະພອນແກ່ຄົນອື່ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**